【出典：出入国在留管理庁　　翻訳：（公財）アジア福祉教育財団】

30 ເມສາ 2020

ສໍານັກງານກວດກາຄົນເຂົ້າເມືອງ

ກ່ຽວກັບການຂະຫຍາຍເວລາໃນການຮັບໃບຄໍາຮ້ອງສະຫມັກ ແລະ ການແຈ້ງຜົນການພິຈາລະນາກວດສອບກ່ຽວກັບໃບຄໍາຮ້ອງສະຫມັກ (ການອອກບັດປະຈໍາໂຕຜູ້ພັກເຊົາສໍາລັບຄົນຕ່າງປະເທດຕ່າງໆ)

○ ການຂະຫຍາຍເວລາໃນການຮັບໃບຄໍາຮ້ອງສະຫມັກ

ເນື່ອງຈາກຜົນກະທົບຈາກການແຜ່ລະບາດຂອງພະຍາດອັກເສບປອດໂຄໂລນາສາຍພັນໃຫມ່ (Covid-19), ເພື່ອປ້ອງກັນການລະບາດຂອງພະຍາດດັ່ງກ່າວ ແລະ ຫຼຸດຜ່ອນຄວາມແອອັດ ປ່ອງຮັບໃບຄໍາຮ້ອງສະຫມັກໄດ້ມີມາດຕະການກ່ຽວກັບການຍື່ນໃບຄໍາຮ້ອງຂໍອະນຸຍາດຕໍ່ ຫຼື ປ່ຽນສະຖານະຂອງບັດປະຈໍາຕົວຜູ້ພັກເຊົາ ສໍາລັບຄົນຕ່າງປະເທດທີ່ມີບັດປະຈໍາຕົວຜູ້ພັກເຊົາທີ່ຫມົດອາຍຸໃນຊ່ວງໄລຍະ <u>ເດືອນມີນາ, ເມສາ, ພຶດສະພາ ແລະ ມິຖຸນາ </u>(*)(ຍົກເວັ້ນຄົນຕ່າງປະເທດທີ່ອາໄສຢູ່ໃນປະເທດຍີ່ປຸ່ນໃນຖານະ ກິດຈະກໍາສະເພາະ(ໄລຍະກະກຽມເດີນທາງອອກປະເທດ))ແມ່ນ<u>ສາມາດຍື່ນໃບສະຫມັກໄດ້ພາຍໃນ 3 ເດືອນຫຼັງຈາກມື້ບັດຫມົດອາຍຸ.</u>

(*) ເຊິ່ງລວມທັງຜູ້ທີ່ເກີດຢູ່ຍີ່ປຸ່ນທີ່ຕ້ອງຍື່ນຂໍສະຖານະການພັກເຊົາທີ່ປະເທດຍີ່ປຸ່ນໃນເດືອນມີນາ, ເມສາ, ພຶດສະພາ ແລະ ມິຖຸນາ.

(*) ກະລຸນາຮັບຮູ້ວ່າ ຫຼັງຈາກມື້ຫມົດກໍານົດໄລຍະການພັກເຊົາ ທ່ານບໍ່ສາມາດອອກປະເທດໂດຍການຂໍອະນຸຍາດເຂົ້າປະເທດອີກຄັ້ງ ຫຼື ໃບອະນຸຍາດເຂົ້າປະເທດພິເສດໄດ້.

○ ການຂະຫຍາຍເວລາໃນການຮັບແຈ້ງຜົນພິຈາລະນາກວດສອບໃບຄໍາຮ້ອງສະຫມັກ

ສໍາລັບຄົນທີ່ມີບັດປະຈໍາຕົວຜູ້ພັກເຊົາ (ຄົນທີ່ມີຖິ່ນພັກເຊົາໄລຍະກາງຫາໄລຍະຍາວ) ທີ່ໄດ້ຍື່ນໃບຄໍາຮ້ອງຂໍອະນຸຍາດປ່ຽນສະຖານະໃນການພັກເຊົາ ຫຼື ຂໍອະນຸຍາດຕໍ່ອາຍຸໄລຍະເວລາໃນການພັກເຊົາຂອງຕົນທີ່ປະເທດຍີ່ປຸ່ນ, <u>ໂດຍປົກກະຕິການແຈ້ງຜົນການພິຈາລະນາກວດສອບໃບຄໍາຮ້ອງ (ການອອກບັດປະຈໍາໂຕຜູ້ພັກເຊົາຕ່າງໆ) ແມ່ນພາຍໃນ 2 ເດືອນຫຼັງຈາກບັດຫມົດອາຍຸ, ແຕ່ໃນຊ່ວງໄລຍະນີ້ຈະຂະຫຍາຍເວລາອອກເປັນ 3 ເດືອນ.</u>

<u>ຖ້າທ່ານບໍ່ມີວຽກດ່ວນສະເພາະ ກະລຸນາຫຼີກລ່ຽງການມາສໍານັກງານ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ.</u>

※ຈຸດປ່ຽນແປງໃນວັນທີ 27 ເມສາ 2020

<u>ໄລຍະເວລາໃນການຮັບແຈ້ງຜົນພິຈາລະນາກວດສອບໃບຄໍາຮ້ອງສະຫມັກ (ການອອກບັດປະຈໍາໂຕຜູ້ພັກເຊົາຕ່າງໆ) ໄດ້ຂະຫຍາຍເວລາອອກເປັນ 3 ເດືອນ.</u>

ຂໍ້ມູນກ່ຽວກັບພະຍາດອັກເສບປອດໂຄໂລນາສາຍພັນໃຫມ່ (Covid-19) ແມ່ນສາມາດເບິ່ງໄດ້ຈາກທີ່ນີ້
(ເວບໄຊຂອງກະຊວງຍຸດຕິທໍາຂອງຍີ່ປຸ່ນ)

## 【ປະກາດແຈ້ງການຈາກສໍານັກງານກວດກາຄົນເຂົ້າເມືອງໂຕກຽວ】

ເພື່ອປ້ອງກັນການແຜ່ລະບາດຂອງພະຍາດອັກເສບປອດໂຄໂລນາສາຍພັນໃຫມ່ (Covid-19), ທາງສໍານັກງານກວດກາຄົນເຂົ້າເມືອງໂຕກຽວໄດ້ມີມາດຕະການ<u>ຈໍາກັດຈໍານວນຄົນເຂົ້າ</u>ສໍານັກງານ.

ຂໍຄວາມກະລຸນາທ່ານໃຫ້ລໍຖ້າຢູ່ທາງນອກ ຈົນກວ່າຈະເຖິງເວລາທ່ານສາມາດເຂົ້າໄດ້.